ດ່ວນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ຫ້ອງການ

ເລກທີ: 154 /ຫກ.

ນະຄອນຫຼວງວຽງຈັນ, ວັນທີ 18 ມັງກອນ 2017.

# ແຈ້ງການ

**ຮຽນ**: ທ່ານ ຫົວໜ້າພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງວຽງຈັນ.

**ເລື່ອງ**: ສະຫຼຸບສັງລວມການຮັບປຶ້ມແບບຮຽນ ແລະ ຄູ່ມືຄູ ທີ່ທາງໂຄງການ SESDP ໄດ້ສົ່ງໃຫ້ແຕ່ລະໂຮງຮຽນມັດທະຍົມສຶກສາທົ່ວປະເທດ.

- ອີງຕາມ: ກອງປະຊຸມເພື່ອປຶກສາຫາລື ແລະ ກະກຽມບົດລາຍງານໃຫ້ ທະນາຄານພັດທະນາອາຊີ (ADB) ຄັ້ງວັນທີ **11 ມັງກອນ 2017**.

**ຫົວໜ້າຫ້ອງການກະຊວງສຶກສາທິການ ແລະ ກິລາ** ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ກົມມັດທະຍົມສຶກສາ ກະຊວງສຶກສາທິການ ແລະ ກິລາ ມີຄວາມຕ້ອງການຢາກໄດ້ບົດສະຫຼຸບລາຍງານການຮັບປຶ້ມແບບຮຽນ ແລະ ຄູ່ມືຄູ ຫຼັກສູດປະຕິຮູບໃໝ່ ທີ່ທາງໂຄງການ SESDP ໄດ້ແບ່ງປັນ ແລະ ສົ່ງໂຮງຮຽນມັດທະຍົມສຶກສາ ພາຍໃນແຂວງຂອງທ່ານ ໃຫ້ລາຍງານສະເພາະແຕ່ ຂັ້ນ **ມ.3, ມ.4, ມ.5, ມ.6** ແລະ **ມ.7** ເພື່ອກະກຽມໃສ່ໃນບົດລາຍງານໃຫ້ ທະນາຄານພັດທະນາອາຊີ (ADB).

ສະນັ້ນ, ຈຶ່ງສະເໜີມາຍັງທ່ານຈົ່ງໄດ້ສະໜອງຂໍ້ມູນໃຫ້ຕາມຄວາມເປັນຈິງທີ່ໄດ້ກຳນົດໃນຕາຕະລາງຄັດຕິດມານີ້ ເຊິ່ງຊ້າສຸດບໍ່ໃຫ້ກາຍວັນທີ ***25 ມັງກອນ 2017*** ໃຫ້ ກົມມັດທະຍົມສຶກສາ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖື.

ຫົວໜ້າຫ້ອງການ

ຫ້ອງການ

ຊີສະໜອນ ສິດທິຣາດວົງສາ

ຕ້ອງການສອບຖາມ ຫຼື ຢາກໄດ້ຂໍ້ມູນເພີ່ມເຕີມ
ກະລຸນາຕິດຕໍ່ຫ້ອງການໂຄງການ SESDP
ໂທລະສັບ: **021-251886**
ແຟັກ: **021-223262, 021-219634**
ອີເມວ: **sesdp.moe@gmail.com**
**moe.secondaryeducation@gmail.com**